ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ຜູ້ວ່າການ ທຫລ ຊີ້ແຈງຕໍ່ກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 5 ຊຸດທີ IX



ໂດຍອີງຕາມວາລະຂອງກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 5 ຊຸດທີ IX ໃນວັນທີ 28 ມິຖຸນາ ທີ່ຜ່ານມາ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຂຶ້ນຊີ້ແຈງຕໍ່ບັນດາຄຳຊັກຖາມຂອງບັນດາຜູ້ແທນສະມາຊິກ ສະພາແຫ່ງຊາດ (ສສຊ) ຈາກເຂດເລືອກຕັ້ງທົ່ວປະເທດ. ໃນນີ້, ທ່ານຜູ້ວ່າການ ທຫລ ໄດ້ຍົກໃຫ້ເຫັນບັນຫາມະຫາພາກຊຶ່ງເປັນສາເຫດ ຕົ້ນຕໍທີ່ເຮັດໃຫ້ ສປປ ລາວ ຂາດເງິນຕາຕ່າງປະເທດ ຄື: **ເມື່ອເກີດບັນຫາຂາດແຄນເງິນຕາຕ່າງປະເທດ**, ທຫລ ໄດ້ລົງເລິກຄົ້ນຄວ້າດ້ານ ໂຄງປະກອບດຸນການຊຳລະລະຫວ່າງປະເທດຂອງ ສປປ ລາວ ໃນໄລຍະ 10 ກວ່າປີຜ່ານມາ, ໂດຍເລີ່ມແຕ່ປີ 2010 ຈົນເຖິງປັດຈຸບັນ ສປປ ລາວ ມີດຸນຊຳລະລະຫວ່າງປະເທດທີ່ເປັນໂຄງປະກອບອັນສຳຄັນ 2 ຢ່າງຄື: ດຸນການຊຳລະປົກກະຕິ (ດຸນການຄ້າ, ດຸນບໍລິການ, ເງິນໄດ້ຈາກແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ອື່ນໆ) ແລະ ດຸນການເງິນ ເຊິ່ງເປັນອົງປະກອບທີ່ສຳຄັນທີ່ໄດ້ປະກອບໃຫ້ ສປປ ລາວ ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ (ຈາກການກູ້ຢືມຂອງພາກລັດຖະບານ-ເອກະຊົນ, ຈາກການລົງທຶນຂອງຕ່າງ ປະເທດ). ຕາມການຄົ້ນຄວ້າເກັບກຳເຫັນໄດ້ວ່າ ສປປ ລາວ ຂາດດຸນການຊຳລະມາໂດຍຕະຫຼອດຢ່າງຍາວນານ (ມີການຊົມໃຊ້ເງິນຕາຕ່າງປະເທດເພື່ອການຊື້ສິນຄ້ານຳເຂົ້າຫຼາຍກວ່າ ການຜະລິດເພື່ອຂາຍສິນຄ້າ ແລະ ສົ່ງອອກເພື່ອນຳເອົາເງິນຕາຕ່າງປະເທດເຂົ້າປະເທດຄືນ), ແຕ່ໃນໄລຍະຊຸມປີ 2010 ໄດ້ມີການລົງທຶນຈາກຕ່າງປະເທດ ແລະ ການກູ້ຢືມ ເຮັດໃຫ້ມີຈຳນວນເງິນຕາຕ່າງປະເທດເຂົ້າມາຫຼາຍເຮັດໃຫ້ດຸນການເງິນມີການ ເກີນດຸນເກີດຂຶ້ນ. ດ້ວຍເຫດນີ້, ເພື່ອເປັນການປ້ອງກັນບັນຫາປະລິມານໜີ້ສາທາລະນະຫຼາຍເກີນໄປ ໃນໄລຍະປີ 2018 ພາກລັດຖະບານ ຈຶ່ງໄດ້ຢຸດຕິການກູ້ຢືມຈາກຕ່າງປະເທດ ຊຶ່ງໄດ້ເຮັດໃຫ້ລາຍຮັບເງິນຕາຕ່າງປະເທດຈາກດຸນນີ້ຫຼຸດລົງ, ສົມທົບກັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ລາຍຮັບຈາກການທ່ອງທ່ຽວຊຶ່ງເປັນແຫຼ່ງລາຍຮັບເງິນຕາຕ່າງປະເທດທີ່ສຳຄັນອີກອັນໜຶ່ງຫຼຸດລົງ ຈາກທີ່ມີລາຍຮັບຫຼາຍຮ້ອຍລ້ານໂດລາສະຫະລັດຕໍ່ປີ. ເນື່ອງຈາກຜົນກະທົບດັ່ງກ່າວເຮັດໃຫ້ ສປປ ລາວ ຂາດລາຍຮັບເປັນເງິນຕາຕ່າງປະເທດຢ່າງໜັກໜ່ວງ ແຕ່ການຊົມໃຊ້ເງິນຕາຕ່າງປະເທດຢູ່ພາຍໃນປະເທດຍັງຢູ່ໃນລະດັບປົກກະຕິ. ດ້ວຍເຫດນີ້, **ທຫລ ຈຶ່ງ**

**ໄດ້ຮີບຮ້ອນແກ້ໄຂບັນຫາການຂາດແຄນເງິນຕາຕ່າງປະເທດທັງແບບຮີບດ່ວນ**ໃຫ້ທັນກັບເຫດການປັດຈຸບັນ ແລະ ການແກ້ໄຂທາງດ້ານໂຄງສ້າງລາຍຮັບໃຫ້ມີຄວາມຍືນຍົງໄປຄວບຄູ່ກັນຊຶ່ງຕ້ອງໄດ້ອາໄສການຮ່ວມມືກັນກັບຫຼາຍພາກສ່ວນເປັນອັນມະຫາພາກ. ໃນການຈັດຕັ້ງປະຕິບັດຕົວຈິງເພື່ອເຮັດໃຫ້ການຂາດດຸນໃນດຸນການຊໍາລະປີກະຕິຫຼຸດໜ້ອຍຖອຍລົງ, ທຫລ ໄດ້ສຸມໃສ່ການຄຸ້ມຄອງເງິນຕາຕ່າງປະເທດທີ່ໄດ້ຮັບຈາກການສົ່ງອອກ ດ້ວຍການລົງເລິກຄົ້ນຄວ້າ, ວິໄຈທາງດ້ານລາຍຮັບເງິນຕາຕ່າງປະເທດຂອງແຕ່ລະຂະແໜງການ ເຊັ່ນ: ຂະແໜງໄຟຟ້າ, ຂະແໜງບໍ່ແຮ່, ຂະແໜງການຜະລິດ ແລະ ອື່ນໆ ແມ່ນເຫັນໄດ້ວ່າມີຈຸດພິເສດສະເພາະຂອງແຕ່ລະຂະແໜງ ຊຶ່ງບໍ່ສາມາດເກັບເອົາເງິນຕາຕ່າງປະເທດຈາກມູນຄ່າສົ່ງອອກໄດ້ 100% (ພາຍໃນເດືອນກໍລະກົດນີ້ ຈະເລັ່ງການຈັດຕັ້ງຜັນຂະຫຍາຍຄໍາສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂົ້າສູ່ການຈັດຕັ້ງປະຕິບັດໄປຄຽງຄູ່ກັບການອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນໍາເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຕິດພັນກັບການລົງທຶນໂດຍກົງລະຫວ່າງປະເທດ) **ຈາກມາດຕະການດັ່ງກ່າວຄາດວ່າກະແສເງິນຕາທີ່ເຂົ້າມາສູ່ລະບົບ ຈະເພີ່ມຂຶ້ນຢ່າງເປັນຮູບປະທໍາໃນປີ 2024 ແລະ ຈະເຮັດໃຫ້ສັດສ່ວນກະແສເງິນຕາເຂົ້າມາຢູ່ໃນລະດັບບໍ່ຕໍ່າກວ່າ 48% ທຽບກັບມູນຄ່າສົ່ງອອກທັງໝົດ ຫຼື 58% ທຽບກັບກະແສເງິນຕາຕົວຈິງທີ່ຄວນຈະເຂົ້າມາລະບົບ (ຫັກພັນທະກູ້ຢືມຕ່າງປະເທດ).** ນອກຈາກນີ້, ເພື່ອເປັນການເພີ່ມແຫຼ່ງລາຍຮັບເງິນຕາຕ່າງປະເທດ ສປປ ລາວ ຍັງຕ້ອງໄດ້ສົ່ງເສີມການລົງທຶນຂອງຕ່າງປະເທດ (FDI) ໃຫ້ໄດ້ຫຼາຍຂຶ້ນ, ຟື້ນຟູການທ່ອງທ່ຽວທີ່ໄດ້ຮັບຜົນກະທົບ; ດ້ານການຫຼຸດຜ່ອນການນໍາໃຊ້ເງິນຕາຕ່າງປະເທດ, ທຫລ ໄດ້ນໍາສະເໜີຕໍ່ລັດຖະບານໃຫ້ມີມາດຕະການຈໍາກັດການນໍາເຂົ້າສິນຄ້າທີ່ເປັນສິນຄ້າຟຸມເຟືອຍຈາກຕ່າງປະເທດໃຫ້ເປັນຮູບປະທໍາຊັດເຈນ ເຊັ່ນ: ຈໍາກັດຈໍານວນໂຄຕ້າ, ເພີ່ມພາສີ, ອາກອນຊົມໃຊ້ຂຶ້ນ ເພື່ອໃຫ້ນໍາໃຊ້ສິນຄ້າດັ່ງກ່າວຫຼຸດລົງ (ໃນນີ້ ທຫລ ໄດ້ສົມທົບກັບຂະແໜງການກ່ຽວຂ້ອງ ເປັນຕົ້ນກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຄົ້ນຄວ້າປັບປຸງກໍານົດໂຄງສ້າງລາຄາສິນຄ້າທີ່ກະທົບໄວຕໍ່ກະຕ່າຂອງດັດສະນີລາຄາຜູ້ຊົມໃຊ້ (CPI) ໂດຍເລີ່ມຈາກ 10 ລາຍການສິນຄ້າ ໂດຍເນັ້ນໃສ່ສິນຄ້າປະເພດໝວດສະບຽງອາຫານ, ໝວດການຜະລິດກະສິກໍາ (ຝຸ່ນ, ຫົວອາຫານ, ແນວພັນ). **ນອກຈາກນີ້, ທ່ານຜູ້ວ່າການ ທຫລ ຍັງໄດ້ຍົກໃຫ້ເຫັນບັນຫາອັດຕາເງິນເຟີ້ຂອງ ສປປ ລາວ** ເຊິ່ງມີຈຸດພິເສດ ທີ່ທິດສະດີການແກ້ໄຂບັນຫາເງິນເຟີ້ອັນລວມ ບໍ່ສາມາດນໍາໃຊ້ແກ້ໄຂໄດ້ໝົດ ເນື່ອງຈາກ ສປປ ລາວ ມີການນໍາເຂົ້າສິນຄ້າເຖິງ 70-80% ເຮັດໃຫ້ອັດຕາແລກປ່ຽນຕິດພັນກັບອັດຕາເງິນເຟີ້ໂດຍກົງຢ່າງຫຼີກລ່ຽງບໍ່ໄດ້ (ໃນນີ້, ຖ້າກໍລະນີອັດຕາແລກປ່ຽນອ່ອນຄ່າ 1% ຈະເຮັດໃຫ້ເງິນເຟີ້ເພີ່ມຂຶ້ນ 0.6%), ສິ່ງຜົນສະທ້ອນເຖິງການຂຶ້ນລາຄາສິນຄ້າຕາມອັດຕາແລກປ່ຽນ ເຊິ່ງພາກສ່ວນທີ່ກ່ຽວຂ້ອງຕ້ອງມີການຄວບຄຸມລາຄາສິນຄ້າບໍ່ໃຫ້ສູງຫຼາຍເກີນໄປ (ເຊັ່ນ: ຜູ້ຈໍາໜ່າຍວາງລາຄາສິນຄ້າໄວ້ເພື່ອອັດຕາແລກປ່ຽນມີການເໜັງຕີງສູງເກີນຄວາມເປັນຈິງ) ຊຶ່ງຕ້ອງໄດ້ມີການຮ່ວມມືກັນຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງ ແລະ ທຫລ ກໍ່ຈະໄດ້ສຸມໃສ່ໜ້າທີ່ຫຼັກຂອງຕົນ ເພື່ອຄຸ້ມຄອງລາຍຮັບທີ່ເປັນເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບທະນາຄານ ແລະ ຫຼຸດຜ່ອນລາຍຈ່າຍເງິນຕາຕ່າງປະເທດໃຫ້ໜ້ອຍລົງ ເພື່ອຊຸກຍູ້ວຽກງານຂອງພາກສ່ວນທີ່ກ່ຽວຂ້ອງ. ສ່ວນຕົວເລກອັດຕາເງິນເຟີ້ແມ່ນຍັງເປັນສິ່ງທີ່ມີຄວາມທ້າທາຍສູງ ທີ່ຈະບັນລຸຕາມຄາດໝາຍທີ່ລັດຖະບານໄດ້ກໍານົດໄວ້ ເຖິງແມ່ນວ່າ ໃນໄລຍະ 6 ເດືອນຕົ້ນປີ ທຫລ ຈະເອົາໃຈໃສ່ໃນການຄົ້ນຄວ້ານະໂຍບາຍ ແລະ ນໍາໃຊ້ຫຼາຍມາດຕະການ ເປັນຕົ້ນ: 1) ໄດ້ດໍາເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນ; 2) ໄດ້ຂຶ້ນອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ; 3) ໄດ້ຂຶ້ນອັດຕາເງິນແຮຝາກບັງຄັບທັງສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ; 4) ໄດ້ອອກຈໍາໜ່າຍພັນທະບັດ ທຫລ ໃຫ້ມວນຊົນໂດຍກົງ ແລະ ໃຫ້ທະນາຄານທຸລະກິດ ເພື່ອດູດເງິນອອກຈາກລະບົບເສດຖະກິດ; 5) ໄດ້ປັບກອບການກໍານົດອັດຕາຊື້-ຂາຍ ຂອງທະນາຄານທຸລະກິດທຽບໃສ່ອັດຕາອ້າງອີງຂອງ ທຫລ ໃຫ້ກວ້າງອອກ; 6) ດັດສົມເງິນຕາຕ່າງປະເທດໃຫ້ແກ່ສິນຄ້ານໍາເຂົ້າບຸລິມະສິດ ຄືນໍ້າມັນເຊື້ອໄຟ ແລະ ໄດ້ມີການດັດສົມຕື່ມ 6 ລາຍການສິນຄ້ານໍາເຂົ້າທີ່ເຫັນວ່າເປັນການນໍາເຂົ້າທີ່ຈໍາເປັນຮັບໃຊ້ການຜະລິດ. ໃນແຜນການ 6 ເດືອນທ້າຍປີ 2023 ນີ້ ທຫລ ຈະສູ້ຊົນໃຫ້ອັດຕາເງິນເຟີ້ຫຼຸດລົງໃຫ້ຢູ່ໃນລະດັບໃກ້ຄຽງກັບຄາດໝາຍທີ່ສະພາແຫ່ງຊາດຮັບຮອງ ແລະ ຮັກສາຄ່າເງິນກີບບໍ່ໃຫ້ອ່ອນຄ່າໄວ. **ດ້ານການຄຸ້ມຄອງການແລກປ່ຽນເງິນຕາ;** ທຫລ ໄດ້ຢຸດຕິການອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາຢ່າງຂາດຕົວ, ພ້ອມນັ້ນ, ໄດ້ອອກຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາ ສະບັບເລກທີ 1026/ທຫລ, ລົງວັນທີ 28 ທັນວາ 2022 ສໍາເລັດການຫັນເອົາຮ້ານແລກປ່ຽນເງິນຕາເຂົ້າສູ່ລະບົບທະນາຄານທັງໝົດ; ຊຸກຍູ້ໃຫ້ທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາຕ່າງປະເທດຜ່ານຊ່ອງທາງອື່ນໃຫ້ຫຼາຍຂຶ້ນ, ໃນປັດຈຸບັນໄດ້ອະນຸຍາດໃຫ້ທະນາຄານການຄ້າຕ່າງປະເທດລາວ ເປີດບໍລິການຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ເພື່ອໃຫ້ລູກຄ້າສາມາດແລກປ່ຽນເງິນ ຕາດ້ວຍກັນ ເປັນຕົ້ນ. **ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ** ແມ່ນຕິດພັນກັບວຽກງານການຄຸ້ມຄອງ ແລະ ກວດກາ ເປັນຕົ້ນແມ່ນການລົງຕິດຕາມກວດກາການຕິດປະກາດ ແລະ ໂຄສະນາລາຄາສິນຄ້າ ແລະ ຄ່າບໍລິການ ຂອງບັນດາຫົວໜ່ວຍທຸລະກິດ, ຕະຫຼາດ ແລະ ຫ້າງຮ້ານ ພາຍໃນນະຄອນຫຼວງວຽງຈັນ, ຊຶ່ງ ທຫລ ໄດ້ມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ: ກະຊວງອຸດສາຫະກໍາ ແລະ ການຄ້າ (ເຈົ້າໜ້າທີ່ການຄ້າ) ແລະ ກະຊວງປ້ອງກັນຄວາມສະຫງົບ (ເຈົ້າໜ້າທີ່ຕໍາຫຼວດເສດຖະກິດ) ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.




ນອກຈາກນີ້, ທ່ານຜູ້ວ່າການ ທຫລ ຍັງໄດ້ຊີ້ແຈງຄໍາຖາມກ່ຽວກັບ**ການອອກພັນທະບັດເພື່ອແກ້ໄຂອັດຕາເງິນເຟີ້, ປະລິມານເງິນ ຄື:** ການອອກພັນທະບັດຂອງທະນາຄານກາງແມ່ນເຄື່ອງມືນະໂຍບາຍເງິນຕາປະເພດໜຶ່ງທີ່ທຸກທະນາຄານກາງທົ່ວໂລກນໍາໃຊ້ ຢ່າງເປັນປົກກະຕິເພື່ອຄຸ້ມຄອງສະພາບຄ່ອງໃນຕະຫຼາດເງິນໃຫ້ຢູ່ໃນລະດັບທີ່ເໝາະສົມ. ສໍາລັບ ສປປ ລາວ ແມ່ນນໍາໃຊ້ເປັນເຄື່ອງມືນີ້ເພື່ອແກ້ໄຂບັນຫາແບບກະທັນຫັນ ເລັ່ງດ່ວນທີ່ໄດ້ຮັບຜົນໄວ ແລະ ທຫລ ໄດ້ດໍາເນີນນະໂຍບາຍເງິນຕາແບບຮັດກຸມນັບແຕ່ໄລຍະກາງປີ 2022 ເປັນຕົ້ນມາ ຊຶ່ງໄດ້ນໍາໃຊ້ການອອກພັນທະບັດ ທຫລ ເປັນເຄື່ອງມືໜຶ່ງ ຄຽງຄູ່ກັບການເພີ່ມອັດຕາດອກເບ້ຍພື້ນຖານ ແລະ ອັດຕາສ່ວນເງິນແຮຝາກບັງຄັບ ເປົ້າໝາຍແມ່ນການຄວບຄຸມປະລິມານເງິນໃຫ້ຂະຫຍາຍຕົວໃນຈັງຫວະທີ່ຫຼຸດລົງ ແລະ ບໍ່ສ້າງຄວາມກົດດັນໃຫ້ມີຄວາມຕ້ອງການເງິນຕາຕ່າງປະເທດອັນເຮັດໃຫ້ເງິນກີບອ່ອນຄ່າ. ຜົນໄດ້ຮັບແມ່ນປະລິມານເງິນຂະຫຍາຍຕົວໃນຈັງຫວະທີ່ຫຼຸດລົງ ຈາກຂະຫຍາຍຕົວສະເລ່ຍຢູ່ໃນລະດັບ 3,32% ຕໍ່ເດືອນ ໃນໄລຍະກ່ອນການອອກຈໍາໜ່າຍພັນທະບັດ ທຫລ ມາຢູ່ໃນລະດັບ 1,79% ຕໍ່ເດືອນ ໃນໄລຍະອອກຈໍາໜ່າຍພັນທະບັດ ທຫລ, ຊຶ່ງຊ່ວຍປະຄັບປະຄອງບໍ່ໃຫ້ເງິນກີບອ່ອນຄ່າ ແລະ ຊ່ວຍບໍ່ໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນຫຼາຍກວ່າລະດັບປະຈຸບັນ.

ນອກຈາກບັນດາຄໍາຖາມທີ່ທ່ານຜູ້ວ່າການ ທຫລ ໄດ້ຊີ້ແຈງຕາມທີ່ໄດ້ກ່າວມາແລ້ວນີ້, ທ່ານຍັງໄດ້ຊີ້ແຈງເພີ່ມເຕີມບາງບັນຫາກ່ຽວກັບສື່ສັງຄົມອອນລາຍທີ່ໄດ້ເຄື່ອນໄຫວໂຈມຕີເງິນກີບ, ການຊື້-ຂາຍເງິນຄຣິບໂຕ, ການເຂົ້າເຖິງແຫຼ່ງທຶນ SME ແລະ ບັນຫາອື່ນໆອີກຫຼາຍບັນຫາ.

**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**